# ໂຄງການ ບັງຄັບຈ່າຍ ເງິນລ້ຽງເດັກ ປະຈຳຣັດວໍຊິງຕັນ



# ສິດທິຟັງເຣື່ອງ ຕ່າງໆກ່ຽວ ກັບການຈ່າຍ ເງິນລ້ຽງເດັກ



Washington State
Department of Social & Health Services
DCS Division of Child Support

## ໃນມື້ຟັງເຣື່ອງຈ່າຍເງິນລ້ຽງດູເດັກນັ້ນຈະມີຫຍັງເກີດຂຶ້ນ?

ອຳນາດປົກຄອງການຟັງເຣື່ອງຕ່າງໆເປັນທຳນຽມທີ່ບໍ່ເປັນທາງການ ແລະ "ຜູ້ໃຊ້ແມ່ນໃຊ້ຢ່າງເປັນເພື່ອນມິດ". ການປະຊຸມຕ່າງໆແມ່ນເຮັດຢູ່ຫ້ອງປະຊຸມຕ່າງໆ, ບໍ່ແມ່ນເຮັດຢູ່ຫ້ອງສານຕ່າງໆ.

ຜູ້ຕັດສິນທີ່ບໍ່ໄດ້ຂຶ້ນກັບຝ່າຍໃດນັ້ນ ເອີ້ນວ່າ ຜູ້ພິພາກສາກົດໝາຍອຳນາດການປົກຄອງ (ALJ) ຖືອຳນາດການຟັງເຣື່ອງຕ່າງໆ. ALJ ເຮັດວຽກໃຫ້ຫ້ອງການປົກຄອງການຟັງເຣື່ອງຕ່າງໆ (OAH). ຫ້ອງການ OAH ບໍ່ແມ່ນສ່ວນໃດໜຶ່ງຂອງກົມສັງຄົມສົງເຄາະແລະສາທາຣະນະສຸກ (DSHS) ຫລືພະແນກເກັບເງິນລ້ຽງດູເດັກ (DCS).

ALJ ທຳການຕັດສິນກໍຣະນີລ້ຽງດູເດັກຂອງທ່ານດ້ວຍການໃຊ້ຂໍ້ມູນຄວາມຈິງຂອງເຣື່ອງແລະກົດໝາຍ. ທ່ານໄປຟັງການຟັງເຣື່ອງດ້ວຍຕົນເອງຫລືທາງໂທຣະສັບ. ທ່ານບອກເຣື່ອງຕ່າງໆຂອງທ່ານ, ຄືກັບທາງພະແນກ DCS ແລະພໍ່ແມ່ຝ່າຍອື່ນອີກ. ການຟັງເຣື່ອງຈະໃຊ້ເວລາປະມານໜຶ່ງຫລືສອງຊົ່ວໂມງ.

## ຂ້າພະເຈົ້າຕ້ອງໄດ້ມີທະນາຍບໍ່?

ຫລາຍໆຄົນກໍ່ເປັນຕົວແທນຂອງເຂົາເຈົ້າເອງໃນການຟັງເຣື່ອງ. ທ່ານອາດເປັນຕົວແທນທ່ານເອງ ຫລືມີທະນາຍ, ໝູ່ຄູ່, ຍາດພີ່ນ້ອງ, ຫລືຄົນອື່ນທີ່ທ່ານເລືອກໃນການເປັນຕົວແທນໃຫ້ທ່ານ. ໃຫ້ຖາມໝູ່ຫລືຍາດພີ່ນ້ອງ ໃຫ້ແນະນຳຫາທະນາຍ, ຫລືໃຫ້ຕິດຕໍ່ຫາບ່ອນໃດໜຶ່ງຢູ່ລຸ່ມນີ້:

- Northwest Justice Project
  888-201-1014
  www.nwjustice.org
- Northwest Women's Law Center
  206-621-7691

ໂຮງຮຽນກົດໝາຍຫລາຍບ່ອນ, ສະມາຄົມອາສາສະໝັກບໍຣິການທະນາຍຕ່າງໆ, ແລະແລະອົງຈັດຕັ້ງກົດໝາຍທີ່ບໍ່ຫວັງຜົນກຳໄຣຕ່າງໆກໍ່ອາດໃຫ້ການຊ່ວຍເຫລືອໄດ້. ນອກຈາກນັ້ນກໍ່ມີສະມາຄົມທະນາຍປະຈຳເຂດຄາວຕີ້ຂອງທ່ານຫລືການບໍຣິການຕ່າງໆທີ່ສະເໜີນຳສົ່ງ (ຕາມທຳມະດາແລ້ວຈະມີບັນຊີລາຍຊື່ຢູ່ວັກສຸດທ້າຍຂອງປຶ້ມໂທຣະສັບໝວດໂຄສະນາ ໃນຫົວເຣື່ອງທີ່ວ່າ "attorney" "ທະນາຍ") ອາດສາມາດຊີ້ນຳໃຫ້ທ່ານຊອກທະນາຍໃນເຂດຊຸມຊົນຂອງທ່ານ.

## ຜູ້ຕາງໜ້າໃຫ້ພະແນກເກັບເງິນລ້ຽງເດັກ (DCS) ສາມາດເຮັດຫຍັງໃຫ້ຂ້າພະເຈົ້າໄດ້?

ຜູ້ຕາງໜ້າໃຫ້ພະແນກເກັບເງິນລ້ຽງເດັກກໍ່ແມ່ນທະນາຍຄົນຜູ້ທີ່ຕາງໜ້າເພື່ອຜົນປະໂຍດຕ່າງໆແກ່ພະແນກ DCS. ຄົນຜູ້ນີ້ບໍ່ແມ່ນຜຕາງໜ້າໃຫ້ທ່ານ. ພະແນກ DCS ອາດມີຜົນປະໂຍດຕ່າງໆທີ່ແຕກຕ່າງກັບຜົນປະໂຍດຕ່າງໆຂອງທ່ານ. ເຖິງຢ່າງໃດກໍ່ຕາມ, ຜູ້ຕາງໜ້າຂອງ DCS ສາມາດອະທິບາຍໃຫ້ທ່ານຮູ້ເຖິງວິທີໃນລະບົບການຟັງເຣື່ອງແລະເຣື່ອງກົດລະບຽບທົ່ວໄປພ້ອມທັງນະໂຍບາຍຕ່າງໆສຳຣັບການຟັງເຣື່ອງຂອງທ່ານ. ຖ້າຫາກທ່ານຕ້ອງການຢາກຫລີກລຽງການຟັງເຣື່ອງ, ທ່ານກໍ່ອາດສາມາດບັນລຸເຖິງຂໍ້ຕົກລົງຫລືແກ້ໄຂສຳນວນຂອງທ່ານກັບຜູ້ຕາງໜ້າຂອງ DCS ໄດ້. ໝົດທຸກຝ່າຍພ້ອມທັງພະແນກ DCS ຕ້ອງໄດ້ຕົກລົງເປັນເອກະສັນກັນກ່ອນເຣື່ອງຈະຖືກແກ້ໄຂໄດ້.

## ຂ້າພະເຈົ້າຈະຂອກຮູ້ໄດ້ຢ່າງໃດວ່າ ເມື່ອໃດຈະເປັນເວລາຟັງເຣື່ອງຂອງຂ້າພະເຈົ້າ?

ຫ້ອງການຟັງເຣື່ອງ (OAH) ຈະສົ່ງໃບແຈ້ງການໆຟັງເຣື່ອງໃຫ້ທ່ານ ຊຶ່ງຈະບອກທ່ານເຖິງມື້, ເວລາ, ແລະສະຖານທີ່ຂອງການຟັງເຣື່ອງ. ໃຫ້ແນ່ໃຈວ່າທ່ານບອກໃຫ້ OAH ແລະ DCS ຮູ້ບ່ອນຢູ່ໄປສະນີປະຈຸບັນຂອງທ່ານ. ຖ້າທ່ານມີການຟັງເຣື່ອງທາງໂທຣະສັບ, ທ່ານຕ້ອງເອົາເລກໂທຣະສັບຂອງທ່ານໃຫ້ DCS ແລະ OAH. ທັງນີ້ກໍ່ເພື່ອໃຫ້ ALJ ຫລືຜູ້ຕາງໜ້າຂອງ DCS ໄດ້ໂທຫາທ່ານໃນມື້ຂອງການຟັງເຣື່ອງນັ້ນ.

## ຂ້າພະເຈົ້າຈະຂໍຮ້ອງເອົາມື້ຫລືເວລາຕ່າງກັນ ສຳຣັບການຟັງເຣື່ອງຂອງຂ້າພະເຈົ້ານັ້ນໄດ້ແນວໃດ?

ຖ້າທ່ານບໍ່ສາມາດມາຟັງເຣື່ອງຂອງທ່ານຕາມມື້ແລະເວລາທີ່ໄດ້ນັດໃຫ້ນັ້ນ, ທ່ານສາມາດຂໍເອົາການເລື່ອນ (ການຊັກຊ້າ) ໄດ້. ໃຫ້ຕິດຕໍ່ຫາຫ້ອງການ OAH ແລະ DCS ຝ່າຍອື່ນໆຢ່າງໜ້ອຍອາທິດໜຶ່ງ ກ່ອນມື້ຂອງການຟັງເຣື່ອງນັ້ນ. ຝ່າຍອື່ນອາດບໍ່ຢາກໃຫ້ເລື່ອນເຣື່ອງ. ຖ້າຝ່າຍອື່ນໆບໍ່ສາມາດຕົກລົງນຳໄດ້, ALJ ຕັດສິນເອງ ຖ້າການຟັງເຣື່ອງນັ້ນຫາກຕ້ອງໄດ້ນັດໃໝ່. ເລກໂທຣະສັບສຳຣັບ OAH ແລະ DCS ແມ່ນຢູ່ໃນໃບແຈ້ງການຟັງເຣື່ອງນັ້ນແລ້ວ.

## ຖ້າຂ້າພະເຈົ້າບໍ່ໄປຟັງເຣື່ອງມັນຈະເປັນແນວໃດ?

ຖ້າທ່ານບໍ່ໄປຟັງເຣື່ອງ, ມັນຈະເປັນຜົນສະທ້ອນຕໍ່ສິດທິຕ່າງໆຂອງການຟັງເຣື່ອງຂອງທ່ານ. ALJ ຕັດສິນບັນຫາການຈ່າຍເງິນລ້ຽງເດັກ ໂດຍຖືຕາມຂໍ້ເທັດຈິງແລະຫລັກຖານຕ່າງໆທີ່ຖືກນຳເຂົ້າສະເໜີໃນການຟັງເຣື່ອງນັ້ນ. ຖ້າທ່ານບໍ່ປາກົດຕົວ, ທ່ານຈະບໍ່ສາມາດບອກ ALJ ໄດ້ວ່າສິ່ງໃດທີ່ທ່ານຄິດວ່າເປັນສິ່ງສຳຄັນ. ທ່ານຄວນໂທຫາ OAH ຫລື DCS ຖ້າຫາກບັນຫາເກີດຂຶ້ນໃນວິນາທີສຸດທ້າຍທີ່ເຮັດໃຫ້ທ່ານພາດການຟັງເຣື່ອງນັ້ນ.

## ຂ້າພະເຈົ້າຈະໄປຟັງເຣື່ອງດ້ວຍຕົນເອງຫລືທາງໂທຣະສັບ?

ໃບແຈ້ງການໆຟັງເຣື່ອງຈະບອກໃຫ້ທ່ານຮູ້ວ່າທ່ານຈະໄປຟັງເຣື່ອງຂອງທ່ານຢູ່ໃສ. ທ່ານອາດຕ້ອງໄດ້ໄປປາກົດຕົວຢູ່ຫ້ອງການ DCS, OAH, ຫລືຫ້ອງການບໍຣິການຊຸມຊົນ (CSO). ຖ້າຄຳແນະນຳຕ່າງໆບອກໃຫ້ທ່ານໄປປາກົດຕົວຢູ່ສະຖານທີ່ສະເພາະໃດໃນການຟັງເຣື່ອງ, ກະຣຸນາຮັບຮູ້ໄວ້ວ່າຝ່າຍອື່ນກໍ່ອາດປາກົດຕົວຢູ່ຫ້ອງດຽວກັນນັ້ນຄືກັນໃນຕອນຟັງເຣື່ອງ ແລະ ALJ ອາດປາກົດຕົວທາງໂທຣະໂທຣະສັບຈາກສະຖານທີ່ອື່ນອີກ.

ບາງເທື່ອໃບແຈ້ງການຈະບອກໃຫ້ທ່ານປາກົດຕົວທາງໂທຣະສັບ, ຖ້າທ່ານມີຂໍ້ຂ້ອງໃຈຕ່າງໆ, ແລະຢາກປ່ຽນວິທີການຟັງເຣື່ອງຂອງທ່ານ, ໃຫ້ຕິດຕໍ່ຫາ OAH ຫລື DCS ໃຫ້ໄວເທົ່າທີ່ຈະໄວໄດ້.

## ຂ້າພະເຈົ້າຈະເຮັດແນວໃດ ຖ້າຂ້າພະເຈົ້າຫາກມີຄວາມຂ້ອງໃຈເຣື່ອງຄວາມປອດໄພສ່ວນຕົວຂອງຂ້າພະເຈົ້າ?

- ແຈ້ງໃຫ້ DCS ຫລື OAH ໃຫ້ໄວເທົ່າທີ່ຈະໄວໄດ້ຕໍ່ຂໍ້ຂ້ອງໃຈຕ່າງໆເຣື່ອງຄວາມປອດໄພຂອງທ່ານໃນການຟັງເຣື່ອງນັ້ນ.
- ໂທຫາ DCS ຫລື OAH ເພື່ອຂໍການຟັງເຣື່ອງທາງໂທຣະສັບ ຖ້າທ່ານມີຂໍ້ຂ້ອງໃຈຕ່າງໆເຣື່ອງຄວາມປອດໄພຂອງທ່ານໃນການຟັງເຣື່ອງນັ້ນ.
- ໃຫ້ບອກ DCS ຖ້າມີຄຳສັ່ງປ້ອງກັນຫລືຄຳສັ່ງຫ້າມໃກ້ຣະຫວ່າງທ່ານ ແລະຝ່າຍກົງກັນຂ້າມ. ທາງຫ້ອງການ DCS ບໍ່ອາດຮູ້ເຖິງຂ່າວຂໍ້ມູນເຣື່ອງນີ້.
- ຖ້າທ່ານມີຄຳສັ່ງປ້ອງກັນຫລືຢ້ານຝ່າຍກົງກັນຂ້າມ, ທ່ານບໍ່ຈຳເປັນຕ້ອງໄປປາກົດຕົວຮ່ວມກັນກໍ່ໄດ້.

## ການຟັງເຣື່ອງແບບໂທຣະສັບຫາກັນນັ້ນແມ່ນເຮັດໄດ້ແນວໃດ?

ທ່ານ, ALJ, DCS, ພະຍານຕ່າງໆ, ຫລື ໜຶ່ງຫລືຫລາຍກວ່າຄົນໜຶ່ງຈາກຝ່າຍອື່ນທີ່ພົວພັນກັບການຟັງເຣື່ອງອາດປະກອບສ່ວນທາງໂທຣະສັບນຳກັນ. ຢ່າງໜ້ອຍທີ່ສຸດແມ່ນມື້ໜຶ່ງກ່ອນມື້ຟັງເຣື່ອງຂອງທ່ານ, ໃຫ້ໝັ້ນໃຈວ່າທ່ານຈະຕ້ອງໄດ້ໄປປາກົດຕົວຟັງເຣື່ອງຢູ່ໃສສະເພາະບໍ່ຫລືວ່າທ່ານຄວນຈະພຽງແຕ່ລໍຖ້າຟັງໂທຣະສັບຢູ່ບ້ານທໍ່ນັ້ນ.

ຖ້າ DCS ຫລື ALJ ຫາກຈະໃຊ້ວິທີໂທຫາທ່ານ, ໃຫ້ໝັ້ນໃຈວ່າທາງ DCS ຫລື ALJ ມີເລກໂທຣະສັບທີ່ຖືກຕ້ອງຂອງທ່ານວ່າທ່ານຈະຢູ່ໃສແທ້ໃນຕອນຟັງເຣື່ອງນັ້ນ. ອາດຈະເລືອກເອົາເລກໂທຣະສັບຢູ່ບ່ອນໃດກໍ່ໄດ້ຕາມຕ້ອງການ. ໃຫ້ໝັ້ນໃຈວ່າໂທຣະສັບຂອງທ່ານຢູ່ບ່ອນນັ້ນວ່າງເປົ່າໂດຍບໍ່ໃຫ້ມີສັນຍານຄາຢູ່ຕອນເພິ່ນໂທເຂົ້າຫາທ່ານ.

ຖ້າທ່ານປາກົດຕົວທາງໂທຣະສັບ, ທ່ານຕ້ອງໄດ້ສົ່ງຫລືແຟັກສ໌ສຳເນົາເອກະສານທຸກຢ່າງຂອງທ່ານໄປໃຫ້ ALJ ແລະຝ່າຍອື່ນໆ
ຢ່າງໜ້ອຍອາທິດໜຶ່ງລ່ວງໜ້າ. ຜູ້ຕາງໜ້າຂອງ DCS ອາດສາມາດຊ່ວຍທ່ານໃນເຣື່ອງນີ້ໄດ້. ໃຫ້ໝາຍ
ຂ້າອອກບ່ອນຢູ່ຟ້ອມທັງຂໍ້ມູນສຳຄັນຕ່າງໆຂອງທ່ານທີ່ທ່ານບໍ່ຢາກໃຫ້ຝ່າຍອື່ນຮູ້.

## ຂ້າພະເຈົ້າຈະຕຽມຕໍ່ການຟັງເຣື່ອງນັ້ນແນວໃດ?

ໃຫ້ນຳເອົາບັນທຶກທາງຂີດຂຽນທຸກຢ່າງຂອງທ່ານນັ້ນມາພ້ອມເພື່ອຊ່ວຍທ່ານຈັດສັນຂໍ້ມູນຂອງທ່ານແລະຊ່ວຍທ່ານຈື່ຈຳສິ່ງທີ່ທ່ານຢາກເວົ້າ. ALJ ຈະຕັດສິນເຣື່ອງໂດຍຖືຕາມຂໍ້ມູນແລະຄວາມເວົ້າຕ່າງໆທີ່ທ່ານແລະພະຍານທັງຫລາຍຊຶ່ງຣວມທັງ DCS ໃຫ້ມາໃນຕອນຟັງເຣື່ອງນັ້ນ.

ໃຫ້ປຶກສາເຣື່ອງຂອງທ່ານກັບຜູ້ຕາງໜ້າຂອງ DCS ກ່ອນມື້ຈະຟັງເຣື່ອງນັ້ນ. ທັງນີ້ ມັນກໍ່ຈະຊ່ວຍທ່ານໄດ້ຮູ້ວ່າບັນຫາຕົ້ນຕໍນັ້ນແມ່ນຫຍັງແທ້. ພ້ອມນັ້ນທ່ານກໍ່ຄວນໃຊ້ເວລານີ້ຕັດສິນໃຈວ່າທ່ານຈຳເປັນຈະຕ້ອງຈ້າງທະນາຍຫລືບໍ່.

## ຂ້າພະເຈົ້າຈະສາມາດຕົກລົງແກ້ໄຂເຣື່ອງ ໂດຍບໍ່ຕ້ອງໄດ້ມີການຟັງເຣື່ອງໄດ້ບໍ່?

ໃຫ້ຕິດຕໍ່ຫາ DCS ຖ້າທ່ານຢາກຕົກລົງແກ້ໄຂບັນຫາກ່ອນການຟັງເຣື່ອງ. ທຸກຝ່າຍ ຣວມທັງ DCS ຕ້ອງໄດ້ເຫັນດີເຫັນພ້ອມກ່ອນທີ່ເຣື່ອງຈະຖືກແກ້ໄຂໄດ້. ຖ້າທ່ານ, ຝ່າຍອື່ນ, ແລະຕົວແທນຂອງ DCS ບໍ່ສາມາດຕົກລົງກັນໄດ້, ທ່ານຍັງມີສິດໃນການຟັງເຣື່ອງ. ຫ້ອງການ OAH ຈະສົ່ງໃບແຈ້ງການຟັງເຣື່ອງໃຫ້. ຖ້າທ່ານຄິດຢາກຈະຕິດຕໍ່ຫາ DCS ກ່ອນການໄດ້ຮັບໃບແຈ້ງການຟັງເຣື່ອງ, ໃຫ້ໂທເລກ **800-442-KIDS** ເພື່ອຖາມເບິ່ງວ່າແມ່ນຫ້ອງການ DCS ກຳກັບສຳນວນເຣື່ອງຂອງທ່ານ.

## ຂ້າພະເຈົ້າຈະຕ້ອງໄດ້ເອົາອັນໃດແດ່ບໍ່ໄປນຳ ເວລາໄປຟັງເຣື່ອງນັ້ນ?

ALJ ຈະຕັດສິນເຣື່ອງໂດຍຖືຕາມຂໍ້ມູນແລະຄວາມເວົ້າຕ່າງໆທີ່ທ່ານ ແລະພະຍານທັງຫລາຍຊຶ່ງຣວມທັງ DCS ໃຫ້ມາໃນຕອນຟັງເຣື່ອງນັ້ນ. ຖ້າທ່ານມີຫນັງສືເອກະສານໃດທີ່ຢາກໃຫ້ ALJ ເບິ່ງ, ໃຫ້ແນ່ໃຈເອົາໄປໃຫ້ DCS ກ່ອນມື້ຈະຟັງເຣື່ອງຂອງທ່ານນັ້ນ.

ຫ້ອງການ DCS ຈຳຕ້ອງໄດ້ຮັບເຈັ້ຽສໍເອກະສານຈາກທ່ານລ່ວງໜ້າຢ່າງໜ້ອຍຫ້າ (**5**) ມື້ຂອງມື້ເຮັດການກ່ອນການຟັງເຣື່ອງ. ຖ້າເປັນໄປໄດ້, ກະຣຸນາສົ່ງເຈັ້ຽສໍເອກະສານຕ່າງໆໄປໄວກວ່ານັ້ນແດ່ເພື່ອໃຫ້ສຳເນົາເອກະສານໄດ້ໄປເຖິງຝ່າຍອື່ນ. DCS ຈະຈັບພາບພົດຂອງທຸກເອກະສານທີ່ທ່ານສົ່ງໃຫ້ນັ້ນແລ້ວກໍ່ຈະຖິ້ມໄປ. ສະນັ້ນຈຶ່ງໃຫ້ສົ່ງແຕ່ສຳເນົາ, ຢ່າສົ່ງຕົ້ນສະບັບໄປ.

ກະຣຸນາສົ່ງສຳເນົາເອກະສານໃຫ້ຝ່າຍໜຶ່ງນຳແດ່ຖ້າທ່ານມີບ່ອນຢູ່ຂອງເຂົາເຈົ້າ. ກະຣຸນາບອກໃຫ້ DCS ຮູ້ແດ່ວ່າທ່ານສາມາດຈະສົ່ງສຳເນົາເອກະສານທຸກຢ່າງດັ່ງກ່າວນັ້ນໄປໃຫ້ຝ່າຍອື່ນໄດ້.

ທ່ານອາດນຳເອົາພະຍານ ຫລື ຄຳຢັ້ງຢືນຂອງເຂົາເຈົ້າທີ່ເຊັນຊື່, ສາບານຕົວ, ພ້ອມທັງລົງວັນທີ. ຝ່າຍອື່ນໆນັ້ນທັງໝົດແມ່ນມີສິດທີ່ຈະເບິ່ງຫລັກຖານ ແລະຮູ້ຈັກວ່າໃຜເປັນພະຍານຂອງທ່ານກ່ອນມື້ຟັງເຣື່ອງ.

ເວລາທ່ານມາຟັງເຣື່ອງ, ໃຫ້ເອົາຊຸດຫລັກຖານຕ່າງໆ (ຫນັງສືເອກະສານຕ່າງໆ, ຣວມທັງຈົດໝາຍແຈ້ງ) ທີ່ DCS ໄດ້ສົ່ງໃຫ້ທ່ານນັ້ນ. ໃຫ້ເອົາເອກະສານຢ່າງອື່ນໆນຳທີ່ທ່ານຄິດວ່າມັນຈະຊ່ວຍກໍຣະນີຂອງທ່ານ. DCS ຈະສົ່ງສຳເນົາເອກະສານທຸກຢ່າງທີ່ທ່ານຍື່ນເຂົ້າໄປໃຫ້ນັ້ນໄປໃຫ້ຝ່າຍອື່ນທຸກໆຄົນນຳ. ໃຫ້ໝາຍຂ້າອອກບ່ອນຢູ່ພ້ອມທັງຂໍ້ມູນສຳຄັນຕ່າງໆຂອງທ່ານທີ່ທ່ານບໍ່ຢາກໃຫ້ຝ່າຍອື່ນຮູ.

## ເວລາໄປຟັງເຣື່ອງ ຂ້າພະເຈົ້າຄວນຈະເອົາຂໍ້ມູນອັນໃດແດ່ໄປນໍາ?

ເມື່ອທ່ານມາຟັງເຣື່ອງ, ໃຫ້ນໍາເອົາເອກະສານຕ່າງໆ, ຣວມຈົດໝາຍແຈ້ງຕ່າງໆ, ທີ່ຕ້ອງການ DCS ໄດ້ສົ່ງໄປສະນີໃຫ້ທ່ານ. ໃຫ້ນໍາເອົາທຸກໆເອກະສານທີ່ທ່ານຄິດວ່າມັນຈະຊ່ວຍສະນັບສະໜູນສໍານວນຂອງທ່ານ, ຊຶ່ງອາດຣວມເຖິງສິ່ງຕໍ່ລົງໄປນີ້:

- ອັດສໍາເນົາເອກະສານທວງຣາຍໄດ້ປະຈໍາປີຂອງສອງປີສຸດທ້າຍທີ່ຜ່ານມາ
- ໃບຄິດໄລ່ເງິນຈ່າຍຄ່າລ້ຽງເດັກກັບຂໍ້ມູນຂອງທ່ານທີ່ນັ້ນ
- ຄໍາສັ່ງລ້ຽງເດັກຕ່າງໆຂອງສານ
- ຫນັງສືເອກະສານຕ່າງໆທີ່ສະແດງເຖິງ:
  - ທ່ານມີຣາຍໄດ້ຫລາຍປານໃດ (ເຊັ່ນຫາງເຊັກຕ່າງໆ, ໜັງສືອະທິບາຍຈາກຜົນການຊ່ວຍເຫລືອຕ່າງໆ, ຫລືເຊັກເງິນຄົນພິການຕ່າງໆ)
  - ຣາຍຈ່າຍຄ່າໝໍຕ່າງໆ
  - ຣາຍຈ່າຍຄ່າປະກັນໄພສຸຂະພາບຕ່າງໆເພື່ອຄຸ້ມກັນເດັກຫລືເດັກທັງຫລາຍ
  - ໃບຈ່າຍຄ່າຝາກເດັກຕ່າງໆ, ຈ່າຍຄ່າປິ່ນປົວສຸຂະພາບຫລືຈ່າຍຄ່າຕ່າງໆໃຫ້ເດັກທັງຫລາຍ
- ໃບຢັ້ງຢືນທີ່ໄດ້ຈ່າຍຄ່າລ້ຽງເດັກ
- ໃບຢັ້ງຢືນທີ່ໄດ້ຈ່າຍຄ່າໃນເຫດການພິເສດຕ່າງໆ ຫລືຣາຍຈ່າຍຕ່າງໆທີ່ທ່ານຢາກໃຫ້ ALJ ນໍາມາພິຈາຣະນາ
- ໃບຢັ້ງຢືນອື່ນໆທີ່ທ່ານຢາກໃຫ້ ALJ ນໍາມາພິຈາຣະນາ

ໝາຍເຫດ: ປະເພດການຟັງເຣື່ອງຕ່າງກັນແມ່ນຕ້ອງການເອກະສານຕ່າງໆທີ່ຕ່າງກັນ

## ສິດທິຕ່າງໆຂອງຂ້າພະເຈົ້າໃນການຟັງເຣື່ອງມີຫຍັງແດ່?

- ທ່ານບໍ່ມີສິດໃນການຊ່ວຍເຫລືອດ້ານກົດໝາຍທີ່ບໍ່ຄິດຄ່າ.
- ທ່ານສາມາດແທນຕົວໃຫ້ທ່ານເອງໃຫ້ຄົນໃດຄົນໜຶ່ງແທນຕົວ ເຊັ່ນທະນາຍ, ໝູ່ຄູ່ຍາດພີ່ນ້ອງ.
- ທ່ານສາມາດສະເໜີຫລັກຖານຫລືຄັດຄ້ານຕໍ່ຫລັກຖານທີ່ຝ່າຍອື່ນອີກມາສະເໜີ.
- ທ່ານສາມາດຂໍຮ້ອງໃຫ້ ALJ ເລື່ອນ (ຊັກຊ້າໄວ້) ການຟັງເຣື່ອງຖ້າທ່ານຫາກມີເຫດຜົນທີ່ດີ.
- ທ່ານສາມາດເບິ່ງຫລືຂໍເອົາສຳເນົາບັນທຶກເອກະສານຕ່າງໆທີ່ກ່ຽວກັບສຳນວນຂອງທ່ານເວລາກ່ອນ, ໃນໄລຍະ, ຫລືຫລັງຈາກການຟັງເຣື່ອງໄດ້.
- ທ່ານສາມາດຂໍເອົາສຳເນົາບັນທຶກເອກະສານຕ່າງໆຂອງ DCS ທີ່ທ່ານເຫັນວ່າມີຄວາມສຳຄັນຕໍ່ການຟັງເຣື່ອງໂດຍບໍ່ຄິດຄ່າໃດໆຕໍ່ທ່ານ ຖ້າທ່ານບໍ່ສາມາດຈະຈ່າຍເອງໄດ້.
- ທ່ານສາມາດຂໍເອົາຫລັກຖານຕ່າງໆຂອງ DCS ທີ່ຕັ້ງໃຈຈະນຳເອົາເຂົ້າມາກ່ອນມື້ຟັງເຣື່ອງໄດ້.
- ທ່ານສາມາດຂໍຮ້ອງໃຫ້ ALJ ລໍຖ້າເອກະສານທີ່ທ່ານຈະສົ່ງເຂົ້າມາເພີ່ມຫລັງຈາກການຟັງເຣື່ອງ.
- ທ່ານສາມາດຖາມຄຳຖາມຕ່າງໆກັບພະຍານ, ຂັດຄ້ານຕໍ່ພະຍານ, ແລະປ້ອງກັນບໍ່ໃຫ້ເອົາຫລັກຖານອອກມາສະແດງການໃຫ້ການຂອງພະຍານຄົນໃດຄົນໜຶ່ງທີ່ບໍ່ຈິງ.
- ທ່ານສາມາດນຳເອົາພະຍານຕ່າງໆມາແລະຂໍໃຫ້ ALJ ນຳເອົາພະຍານເຂົ້າມີສ່ວນໃນການຟັງເຣື່ອງ. ທ່ານຍັງສາມາດຂໍຮ້ອງໃຫ້ ALJ ບອກໃຫ້ພະຍານທັງຫລາຍໄດ້ສົ່ງ ຫລືນຳເອົາຫລັກຖານຕ່າງໆທີ່ຈຳເປັນນັ້ນມາໃນຕອນຟັງເຣື່ອງ. DCS ມີສິດນຳເອົາພະຍານຂອງ DCS ມາຊັກຖາມພະຍານຂອງທ່ານນຳ.
- ທ່ານສາມາດຂໍຮ້ອງໃຫ້ ALJ ສັ່ງໃຫ້ພະຍານລໍຖ້າຢູ່ນອກຫ້ອງຟັງເຣື່ອງ. ນີ້ກໍ່ເພື່ອປ້ອງກັນຄວາມລັບສ່ວນຕົວຫລືເພື່ອຮັກສາບໍ່ໃຫ້ພະຍານມີຜົນສະທ້ອນຕໍ່ກັນແລະກັນ.
- ທ່ານສາມາດເບິ່ງແລະເອົາສຳເນົາຂອງນະໂຍບາຍ, ຣະບຽບການ, ຂໍ້ແນະນຳແລະເອກະສານແຈກພິມຕ່າງໆໃດໜຶ່ງຂອງ DCS ທີ່ພົວພັນກັບການຟັງເຣື່ອງຂອງທ່ານ.
- ທ່ານສາມາດຂໍເອົາການຟັງເຣື່ອງທາງໂທຣະສັບມາເປັນການຟັງເຣື່ອງແບບໄປປາກົດຕົວ, ຖ້າທ່ານມີເຫດຜົນທີ່ດີ. ການຟັງເຣື່ອງແບບ "ໄປປາກົດຕົວ" ນັ້ນ ໝາຍຄວາມວ່າທ່ານຈະຢູ່ຮ່ວມຫ້ອງກັບ ALJ ໃນຕອນຟັງເຣື່ອງນັ້ນ.

## ALJ ຈະຕັດສິນແບບໃດ?

ຖ້າເຫດຜົນສຳຣັບການຟັງເຣື່ອງຂອງທ່ານແມ່ນເພື່ອສ້າງຕັ້ງຫລືດັດແປງການລ້ຽງເດັກ, ALJ ຈະເຮັດການຕັດສິນຕ່າງໆໂດຍໃຊ້ຕາຕຣາງການລ້ຽງເດັກພາຍໃຕ້ໝວດ 26.19 RCW.

ເມື່ອໃດຫາກຄຳສັ່ງຂອງສານຊັ້ນສູງຍັງມີຢູ່, ALJ ຈະເຮັດການຕັດສິນໂດຍປະຕິບັດຕາມຂໍ້ແນະນຳ.

## ຫລັງຈາກການຟັງເຣື່ອງແລ້ວຈະມີຫຍັງເກີດຂຶ້ນ?

ALJ ບໍ່ໄດ້ຕັດສິນຊີ້ຂາດໃນຕອນຟັງເຣື່ອງນັ້ນ. ALJ ຈະສົ່ງຄຳຕັດສິນໃຫ້ທ່ານທາງໄປສະນີປະມານສາມອາທິດຫລັງຈາກການຟັງເຣື່ອງ. ມັນເປັນຄວາມຮັບຜິດຊອບຂອງທ່ານເພື່ອໃຫ້ແນ່ໃຈວ່າທາງຫ້ອງການ OAH ມີບ່ອນຢູ່ໄປສະນີທີ່ຖືກຕ້ອງຂອງທ່ານ. OAH ສົ່ງຄຳສັ່ງໄປຫາບ່ອນຢູ່ໄປສະນີຂອງທ່ານທີ່ຮັບຮູ້ຕອນສຸດທ້າຍ. ຖ້າທ່ານບໍ່ໄດ້ຮັບສຳເນົາຄຳສັ່ງ, ໃຫ້ໂທຫາພະແນກ DCS ໃນເລກ 800-442-KIDS.

ສິດທິການຟັງເຣື່ອງຂອງທ່ານແມ່ນມີຜົນສະທ້ອນທັງໆທີ່ວ່າທ່ານບໍ່ໄດ້ຮັບສຳເນົາຄຳສັ່ງ.

## ຖ້າຂ້າພະເຈົ້າບໍ່ພໍໃຈກັບຄຳຕັດສິນຂອງ ALJ ແລ້ວຈະເຮັດແນວໃດ?

ຄຳສັ່ງຈະບັນຈຸປະກອບດ້ວຍຂ່າວຂໍ້ມູນເຣື່ອງສິດທິອຸທອນຕ່າງໆຂອງທ່ານ. ຖ້າ ALJ ຫາກອອກເປັນຄຳສັ່ງສຸດທ້າຍ, ທ່ານອາດອຸທອນຂຶ້ນຫາສານຊັ້ນສູງເພື່ອໃຫ້ຜູ້ພິພາກສາທົບທວນຄຳສັ່ງນັ້ນ.

## ຂ້າພະເຈົ້າຈະຊອກພົບກົດໝາຍການຟັງເຣື່ອງໄດ້ຢູ່ໃສ?

ທ່ານອາດຊອກເບິ່ງກົດຣະບຽບຕ່າງໆທີ່ນຳໃຊ້ກັບການຟັງເຣື່ອງອອກເງິນລ້ຽງເດັກ. ສຳເນົາກົດໝາຍຂອງຣັດວໍຊິງຕັນແມ່ນມີຢູ່ຫໍສະມຸດມວນຊົນຫລືຫໍສະມຸດກົດໝາຍຕ່າງໆ. ທ່ານກໍ່ຍັງສາມາດຊອກເບິ່ງໄດ້ຕາມອິນເຕີແນັດທີ່:

- Revised Code of Washington (RCW)
  http://mrsc.org/rcw.htm
- Washington Administrative Code (WAC)
  http://mrsc.org/wac.htm
  (ໄປຫາ WAC ພາກທີ 388-14A ແລະ 388-02).

## ຖ້າຂ້າພະເຈົ້າມີຄຳຖາມຕ່າງໆເພີ່ມເຕີມເດ?

ຖ້າທ່ານມີຄຳຖາມທີ່ບໍ່ໄດ້ຖືກຕອບເທື່ອຢູ່ໃນບັດຂ່າວສານນີ້, ທ່ານຄວນ:

1. ໂທຫາພະແນກເກັບເງິນລ້ຽງເດັກ (DCS);
2. ໃຫ້ໂທຫາຫ້ອງການອຳນາດການປົກຄອງຟັງເຣື່ອງ (OAH); ຫລື
3. ຕິດຕໍ່ຫາທະນາຍ.

## ຖ້າຂ້າພະເຈົ້າປາກພາສາອັງກິດບໍ່ໄດ້ຄັກເດ?

ຖ້າທ່ານເອງຫລືພະຍານຫາກຕ້ອງການຜູ້ແປພາສາຂຽນຫລືພາສາປາກ, OAH ຈະຫານາຍພາສາທີ່ຖືກຢັ້ງຢືນຈາກສານໃຫ້ທ່ານໂດຍບໍ່ຄິດຄ່າ. ທ່ານຄວນຖາມເອົານາຍພາສາຢ່າງໜ້ອຍຕ້ອງແມ່ນອາທິດໜຶ່ງລ່ວງໜ້າກ່ອນມື້ຟັງເຣື່ອງ. ໝູ່ຄູ່ຫລືຍາດພີ່ນ້ອງບໍ່ອາດເປັນນາຍພາສາຂອງທ່ານໄດ້.

## ຖ້າຂ້າພະເຈົ້າຕ້ອງການຄວາມສະດວກພິເສດຕ່າງໆ ຢ່າງອື່ນເດ?

ຫ້ອງການ DSHS, DCS, ແລະ OAH ທັງຫລາຍເປັນບ່ອນທີ່ໃຫ້ລໍ້ນັ່ງຜູ້ພິການເຂົ້າເຖິງໄດ້. ໃຫ້ຖາມເອົາຄວາມຊ່ວຍເຫລືອຢ່າງໜ້ອຍອາທິດໜຶ່ງກ່ອນມື້ຟັງເຣື່ອງ ຖ້າທ່ານຫລືພະຍານຫາກຕ້ອງການໆຊ່ວຍເຫລືອພິເສດ ເຊັ່ນ:

- ນາຍພາສາໃບ້ທີ່ໄດ້ຮັບການຢັ້ງຢືນ
- ວັດຖຸຫນັງສືທີ່ເປັນຕົວນູນສຳຫລັບຄົນຕາບອດ ຫລືໃນຮູບແບບອື່ນ

ຣັດວໍຊິງຕັນໃຫ້ການຊ່ວຍເຫລືອໂດຍບໍ່ຄິດຄ່າ ຖ້າທ່ານຫລືພະຍານຫາກຈຳເປັນມີນາຍພາສາຂຽນອ່ານ ຫລືນາຍພາສາປາກເວົ້າ, ຫລືຖ້າທ່ານຕ້ອງການການຊ່ວຍເຫລືອຍ້ອນສະພາບຄວາມພິການ.

ກະຣຸນາຕື່ມຣ່າງໃບຄຳຮ້ອງຂໍການຊ່ວຍເຫລືອກັບຫ້ອງການອຳນາດການປົກຄອງຟັງເຣື່ອງທີ່ຕິດຂັດມາພ້ອມນີ້. ເພື່ອຄວາມສະດວກຂອງທ່ານ, ພວກເຮົາກໍ່ໄດ້ພິມບ່ອນຢູ່ໃສ່ດ້ານຫລັງຂອງໃບຄຳຮ້ອງນັ້ນແລ້ວ.

## ໃບຄຳຮ້ອງຂໍເອົານາຍພາສາຂຽນອ່ານ, ນາຍພາສາປາກເວົ້າ, ຫລືການຊ່ວຍເຫລືອພິເສດ

ທາງຣັດໃຫ້ການຊ່ວຍເຫລືອໂດຍບໍ່ຄິດຄ່າຖ້າທ່ານ ຫລືພະຍານຫາກຕ້ອງການນາຍພາສາຂຽນອ່ານ ຫລືນາຍພາສາປາກເວົ້າ ຫລືຕ້ອງການໆຊ່ວຍເຫລືອຍ້ອນສະພາບຄວາມພິການ.

☐ ຂ້າພະເຈົ້າຕ້ອງການເອກະສານເປັນ (ພາສາ) ______ ແລະ/ຫລືຕ້ອງການໆຊ່ວຍເຫລືອຈາກນາຍພາສາ.

☐ ຂ້າພະເຈົ້າຕ້ອງການໆຊ່ວຍເຫລືອພິເສດ (ໃຫ້ບອກພວກເຮົາວ່າທ່ານຕ້ອງການຫຍັງທີ່ຈຳເປັນ) ______

ຊື່ ______

ເລກໂທຣະສັບ ______ ເລກສຳນວນຂອງ DCS: ______

Postage
Required
Post Office will
not deliver
without proper
postage.

OFFICE OF ADMINISTRATIVE HEARINGS
PO BOX 42488
OLYMPIA WA 98504-2488

Washington State
Department of Social & Health Services

DCS Division of Child Support